*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 01, 40-49*
*https://doi.org/10.69692/SUJMRD1240*

# Factors Affecting Debt Default on Poverty Alleviation Loan of Nayoby Bank: The Case Study of Pha Udom District Service Unit of the Nayoby Bank, Luang Namtha Branch

**Phayvanh PHOUNNALY [1], Kang MANYVANG [2] and Xay BOUNPHONG [3]**

*Department of Business Management, Faculty of Economic and Tourism, Souphanouvong University, Lao PDR*

[1*]**Correspondence:** Phayvanh PHOUNNALY, Administration management office, Rector's office, Souphanouvong University, Tel: +8562022350340, E-mail: phounnaly@gmail.com
2 Governor office of Pha Oudom District, Bokeo Province, Tel: +8562054353666, E-mail: kangmanyvang44@gmail.com
3Academic management office, Rector's office, Souphanouvong University, Tel: +8562023956229, E-mail: xaybp28@gmail.com

***Article Info:***
***Submitted: September 04, 2025***
***Revised: December 30, 2025***
***Accepted: January 26, 2026***

**Abstract**

The purposes of study were to study: 1) the debt default situation of the poverty alleviation loan, 2) the causes contributing to debt default in poverty alleviation loans, and 3) factors affecting debt default on poverty alleviation loan of Nayoby bank. The target population for this research was 156 debtors from the Pha Oudom district service unit of the Nayoby bank, Luang Namtha branch. Data analysis was conducted by using statistical methods including frequency, percentage, mean, standard deviation, and an ordered probit model to estimate coefficients.

The research found that: 1) the debt default situation of the poverty alleviation loan of Pha Oudom district service unit of the Nayoby bank, Luang Namtha branch, most had outstanding balances of between 11 and 20 million kip. The majority of these debts was no more than three months past their due date. In these cases, debtors contacted the bank to request a repayment extension under the original loan conditions. The solution to the default problem would be implemented at the district committee level, with bank officers directly following up with debtors to collect the debts. 2) the causes contributing to debt default in poverty alleviation loans of Pha Oudom district service unit of the Nayoby bank, Luang Namtha branch stem from three main factors: debtor factors, internal factors related to the Policy Bank, and external factors. 3) factors affecting debt default on poverty alleviation loan of Pha Oudom district service unit of the Nayoby bank, Luang Namtha branch, consist of five factors such as: loan amount, family problems, changes in loan interest rates, inconvenient payment channels, premiums, and technological changes at a statistical significance level of 0.1. The ordered probit regression model achieved a prediction accuracy of 91.7%.

***Keyword:*** *Loan Default, Poverty Loan, Nayoby Bank*

## 1. ພາກສະເໜີ

ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ IX (2021-2025) ເພື່ອພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນໃຫ້ທົ່ວເຖິງຕາມທິດສາມສ້າງ ແລະ ສ້າງຊົນນະບົດໃໝ່ ໂດຍລັດຖະບານ ສປປ ລາວ ໄດ້ວາງຈຸດສຸມວຽກງານຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຄື: (1) ພັດທະນາໂຄງລ່າງພື້ນຖານຊົນນະບົດ ຢູ່ເຂດຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງລັດຖະບານ ແລະ ທ້ອງຖິ່ນ; (2) ຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນຖາວອນໃຫ້ແກ່ປະຊາຊົນ; (3) ສຸມໃສ່ຈັດສັນຄອບຄົວປະຊາຊົນທີ່ບໍ່ມີພູມລຳເນົາຄົງທີ່, ບໍ່ມີບ່ອນທຳມາຫາກິນ, ບໍ່ມີອາຊີບທີ່ໝັ້ນຄົງ ແລະ ບໍ່ມີເງື່ອນໄຂພັດທະນາທີ່ຍືນຍົງ; (4) ສືບຕໍ່ຈັດຕັ້ງກອງທຶນເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ທຶນພັດທະນາຊາຍແດນ; (5) ສົ່ງເສີມການລົງທຶນຂອງທຸລະກິດຕິດພັນກັບການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; (6) ປັບປຸງສູນເຕັກນິກຕ່າງໆ ພ້ອມທັງຊຸກຍູ້ດ້ານເຕັກນິກວິຊາການ ໃນຂົງເຂດການຜະລິດ, ຕ່ອງໂສ້ການ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*http://creativecommons.org/licenses/by-nc-nd/4.0/

ຜະລິດ ແລະ ການດຳເນີນທຸລະກິດ (Ministry of Planning and Investment, 2021).

ການເຄື່ອນໄຫວ ແລະ ການບໍລິຫານວຽກງານສິນເຊື່ອ ທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ໂດຍຄະນະໜ່ວຍບໍລິການພ້ອມທັງພະນັກງານສິນເຊື່ອໄດ້ເອົາໃຈໃສ່ລົງເຄື່ອນໄຫວວຽກງານສິນເຊື່ອຢ່າງຕໍ່ເນື່ອງ ແລະ ມີຄວາມຮັບຜິດຊອບສູງ ເຊິ່ງມາຮອດເດືອນ ມິຖຸນາ 2023 ການບໍລິຫານສິນເຊື່ອທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ມີປະກົດການຫຍໍ້ທໍ້ ແລະ ຕິດພັນປະຈຳເດືອນ 1 ຫາ ເດືອນ 12 ພົບວ່າ: ມີຜູ້ຄ້າງຊຳລະໜີ້ ຈຳນວນ 156 ຄົນ ແລະ ມີໜີ້ຄ້າງຊຳລະທັງໝົດ 3,314,149,390 ກີບ ໂດຍມີຕົ້ນທຶນຄ້າງຊຳລະກວມເອົາ 69.38% ແລະ ດອກເບ້ຍຄ້າງຊຳລະກວມເອົາ 30.62% ເຊິ່ງແກ້ໄຂຮອດຄະນະກຳມະການຂັ້ນເມືອງແລ້ວ, ສ້າງປຶ້ມບັນທຶກການຜ່ອນຜັນ - ການປະນອມໜີ້ກັບທະນາຄານ, ທະນາຄານສະເໜີໃຫ້ສາຂາທະນາຄານແກ້ໄຂ, ແກ້ໄຂຮອດການຈັດຕັ້ງຂອງລູກໜີ້, ປະຕິບັດຕາມປຶ້ມບັນທຶກການຜ່ອນຜັນ - ການປະນອມໜີ້ກັບທະນາຄານ ໂດຍບັນຫາທີ່ເຮັດໃຫ້ມີໜີ້ກາຍສັນຍາ ແລະ ກາຍເປັນເປັນໜີ້ NPL ມາຈາກສະພາບຄວາມຫຍຸ້ງຍາກເສັ້ນທາງໃນການຕິດຕາມລູກໜີ້, ລູກຄ້າບໍ່ໃຫ້ການຮ່ວມມືຍັງມີລັກສະນະຫຼົບຫຼີກ, ບໍ່ມີຄວາມຈິງໃຈ, ບາງບ້ານບໍ່ໃຫ້ການຮ່ວມມືເທົ່າທີ່ຄວນ ແລະ ທາງດ້ານໜີ້ຄຸມເຄືອ ເປັນຕົ້ນ (Luang Namtha Nayoby Bank branch, 2023).

ທະນາຄານນະໂຍບາຍ ເປັນທະນາຄານສະເພາະກິດ ທີ່ມີບົດບາດສຳຄັນໃນການປ່ອຍສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາຊົນນະບົດ ດ້ວຍອັດຕາດອກເບ້ຍຕໍ່າ ຕາມແນວທາງນະໂຍບາຍຂອງພັກ - ລັດຖະບານ ເພື່ອແນໃສ່ຫັນປ່ຽນພື້ນຖານເສດຖະກິດທຳມະຊາດໄປສູ່ການຜະລິດເປັນສິນຄ້າໃນຂົງເຂດກະສິກຳ - ປ່າໄມ້, ອຸດສາຫະກຳຂະໜາດນ້ອຍ, ຫັດຖະກຳ ແລະ ການບໍລິການ ໃຫ້ມີການຂະຫຍາຍຕົວ ( Nayoby Bank, 2006). ການໃຫ້ສິນເຊື່ອທະນາຄານທຸລະກິດສະເພາະກິດ ເກີດມີໜີ້ກາຍສັນຍາ ແລະ ກາຍເປັນໜີ້ NPL ເພີ່ມຂຶ້ນ ມີສາຍເຫດມາຈາກ 3 ປັດໄຈຫຼັກ ຄື: ປັດໄຈພາຍໃຈ, ປັດໄຈພາຍນອກ ແລະ ປັດໄຈທີ່ເກີດມາຈາກຕົວລູກໜີ້ (Pittayawiwit, 1991). ນອກຈາກນັ້ນ, ການຄົ້ນຄວ້າຂອງ Phounnaly (2019), Seetaboot (2019), Koothong (2015), Somtua (2015), Klinkajon (2023), Supakarang et al. (2019) ແລະ Laorattanasai (2023) ໄດ້ສະຫຼຸບວ່າ: ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊຳລະໜີ້ຂອງລູກໜີ້ທະນາຄານທຸລະກິດ ເກີດມາຈາກ 3 ປັດໄຈ ຄື: ປັດໄຈທີ່ເກີດມາຈາກຕົວລູກໜີ້, ປັດໄຈພາຍໃນທະນາຄານ ແລະ ປັດໄຈພາຍນອກ ໂດຍປັດໄຈລູກໜີ້ເກີດມາຈາກການຍ້າຍທີ່ຢູ່ອາໄສ/ປ່ຽນແປງວຽກງານ, ເຈດຕະນາບໍ່ຊຳລະໜີ້/ນຳເງິນໄປຊຳລະໜີ້ອື່ນໆ. ປັດໄຈພາຍໃນທະນາຄານເກີດມາຈາກການປ່ຽນແປງອັດຕາດອກເບ້ຍ, ຊ່ອງທາງການຕິດຕໍ່ຊຳລະໜີ້ບໍ່ສະດວກ, ໄລຍະເວລາໃນການຜ່ອນຊຳລະໜີ້ນ້ອຍ. ສ່ວນປັດໄຈພາຍນອກເກີດມາຈາກພາວະເສດຖະກິດບໍ່ດີ, ນະໂຍບາຍຂອງລັດຖະບານມີການປ່ຽນແປງ ແລະ ໄພພິບັດທຳມະຊາດ ເປັນຕົ້ນ.

ສະນັ້ນ, ຈາກການປະຕິບັດຕາມແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ IX (2021-2025), ບັນຫາໜີ້ກາຍສັນຍາ ແລະ ກາຍເປັນເປັນໜີ້ NPL ຂອງທະນາຄານນະໂຍບາຍ ໂດຍສະເພາະໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ນັບມື້ນັບສູງຂຶ້ນ ຈຶ່ງເຮັດໃຫ້ຜູ້ຄົ້ນຄວ້າສົນໃຈຫົວຂໍ້: ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ: ກໍລະນີສຶກສາໜ່ວຍບໍລິການເມືອງຜາອຸດົມ ໂດຍມີຈຸດປະສົງໃນການຄົ້ນຄວ້າ ຄື: 1) ສະພາບການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ; 2) ປັດໄຈທີ່ເປັນສາຍເຫດການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ແລະ 3) ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າ ຄື ລູກໜີ້ທີ່ຜິດນັດການຊຳລະໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ມີຈຳນວນທັງໝົດ 156 ຄົນ (Luang Namtha Nayoby Bank branch, 2023), ເນື່ອງຈາກກຸ່ມປະຊາກອນມີຈຳນວນໜ້ອຍ ຈຶ່ງກຳນົດຂະໜາດຕົວຢ່າງຂອງກຸ່ມປະຊາກອນທັງໝົດ.

### 2.2 ເຄື່ອງມືໃນການຄົ້ນຄວ້າ

1) ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ: ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນແບບສອບຖາມ ເຊິ່ງປະກອບມີ 3 ສ່ວນ ທີ່ມີເນື້ອໃນລາຍລະອຽດ ດັ່ງນີ້:

ສ່ວນທີ 1: ສະພາບຂໍ້ມູນຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຢູ່ທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ເຊິ່ງປະກອບມີ: ເພດ, ອາຍຸ, ສະຖານະພາບ, ລະດັບການສຶກສາ, ອາຊີບ, ຈຳນວນສະມາຊິກໃນຄົວເຮືອນ, ລາຍໄດ້ຕໍ່ເດືອນຕໍ່ຄອບຄົວ, ລາຍຈ່າຍຕໍ່ເດືອນຕໍ່ຄອບຄົວ ແລະ ຈຳນວນໜີ້ລວມທີ່ຜິດນັດຊຳລະ ໂດຍຄຳຖາມເປັນລັກສະນະແບບເລືອກຄຳຕອບ (Check List).

ສ່ວນທີ 2: ສະພາບການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ປະກອບມີ: ປະລິມານເງິນຜິດນັດຊຳລະໜີ້, ໄລຍະເວລາໜີ້ກາຍສັນຍາເງິນກູ້, ການດຳເນີນການຂອງລູກໜີ້ ແລະ ຂັ້ນຕອນຕິດຕາມທວງໜີ້ຂອງທະນາຄານ, ການດຳເນີນການ ແລະ ວິທີການແກ້ໄຂໜີ້ກາຍສັນຍາ ໂດຍຄຳຖາມເປັນລັກສະນະແບບເລືອກຄຳຕອບ (Check List).

ສ່ວນທີ 3: ປັດໄຈທີ່ເປັນສາຍເຫດການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ປະກອບມີ: ປັດໄຈດ້ານລູກໜີ້, ປັດໄຈດ້ານພາຍໃນທະນາຄານ ແລະ ປັດໄຈພາຍນອກ ໂດຍຄຳຖາມເປັນລັກສະນະເລືອກຄຳຕອບ (Check List) ແລະ ມາດຕາສ່ວນ (Rating Scale).

ເກນໃນການໃຫ້ຄະແນນລະດັບປັດໄຈທີ່ເປັນສາຍເຫດການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ມີລັກສະນະເປັນມາດຕາສ່ວນ (Rating Scale) ແບ່ງອອກເປັນ 5 ລະດັບ ແລະ ກຳນົດຄະແນນ 1-5 ຂອງ Rensis Likert (Likert, 1932) ການສ້າງເຄື່ອງມືໃນການຄົ້ນຄວ້າໄດ້ອີງໃສ່ທິດສະດີກ່ຽວກັບສາຍເຫດຂອງການມີໜີ້ຄ້າງຊຳລະ (Pittayawiwit, 1991), ແນວຄິດຫຼັກການໃນການຈາລະນາການໃຫ້ສິນເຊື່ອຕາມຫຼັກການ 6C's (Sungkhamanee, 2007), ນະໂຍບາຍການສິນເຊື່ອເພື່ອຊຸກຍູ້ໃນການຜະລິດສິນຄ້າ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ (Bank of the Lao. PDR, 2020), ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (Bank of the Lao. PDR, 2018).

2) ການຫາຄຸນະພາບເຄື່ອງມື

- ການກວດສອບຄວາມທ່ຽງ: ຜູ້ຄົ້ນຄວ້ານຳແບບສອບຖາມໃຫ້ຜູ້ຊ່ຽວຊານ ຈຳນວນ 3 ທ່ານ ພິຈາລະນາ ຄວາມສອດຄ່ອງລະຫວ່າງຂໍ້ຄຳຖາມ ແລະ ຈຸດປະສົງ ຂອງການຄົ້ນຄວ້າ ເຊິ່ງເອີ້ນວ່າ ດັດຊະນີຄວາມສອດຄ່ອງ (Index of Item Objective Congruence: IOC) ທີ່ພັດທະນາໂດຍ Rovinelli & Hambleton (1977). ຜົນການທົດສອບ ໄດ້ຄ່າ IOC ຢູ່ລະຫວ່າງ 0.67-1.00 ເຊິ່ງສູງກວ່າເກນທີ່ກຳນົດ ສະແດງວ່າ ແບບສອບຖາມສາມາດນຳໄປເກັບຂໍ້ມູນຈິງໄດ້.

- ການກວດສອບຄວາມເຊື່ອໝັ້ນ: ຜູ້ຄົ້ນຄວ້ານຳແບບໄປທົດສອບຄວາມເຊື່ອໝັ້ນກັບກຸ່ມເປົ້າໝາຍ ຈຳນວນ 30 ສະບັບ ດ້ວຍວິທີຂອງ Cronbach's Alpha (Taber, 2017). ຜົນການທົດສອບພົບວ່າ: ຄ່າລະດັບຄວາມເຊື່ອໝັ້ນແມ່ນ 90.50% ເຊິ່ງສູງກວ່າເກນມາດຕະຖານຂອງ Cronbach's Alpha ກຳນົດໄວ້ 80% ສະແດງວ່າ ແບບສອບຖາມມີຄວາມເໝາະສົມໃນການຄົ້ນຄວ້າຄັ້ງນີ້ ແລ້ວຈຶ່ງນຳເກັບກຳກຸ່ມຕົວຢ່າງ ຈຳນວນ 156 ສະບັບ.

### 2.3 ການເກັບກຳລວບລວມຂໍ້ມູນ

ຜູ້ຄົ້ນຄວ້າໄດ້ລົງເກັບກຳຂໍ້ມູນດ້ວຍຕົນເອງ ເຊິ່ງຂຽນໜັງສືສະເໜີເກັບກຳຂໍ້ມູນນຳທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ແລະ ແຈກຢາຍແບບສອບຖາມໃຫ້ລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາແຂວງຫຼວງນ້ຳທາ ຈຳນວນ 156 ຄົນ. ຫຼັງຈາກລູກໜີ້ຕອບແລ້ວເກັບລວບລວມຂໍ້ມູນຢ່າງເປັນລະບົບລວມທັງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວມາປ້ອນຂໍ້ມູນເຂົ້າໂປຣແກຣມ GRETL ເພື່ອດຳເນີນການວິເຄາະ ແລະ ແປຜົນການຄົ້ນຄວ້າ.

### 2.4 ແບບຈຳລອງທາງເສດຖະມິຕິ

ແບບຈຳລອງທີ່ໃຊ້ການຄົ້ນຄວ້າ ແມ່ນອີງໃສ່ສົມຜົນການຖົດຖອຍໂພຣບິດແບບຈັດລຽງລຳດັບ (Ordered Probit Model) ຂອງ Fullerton (2009), Johnston et al. (2019) ແລະ ອີງໃສ່ແບບຈຳລອງການຄົ້ນຄວ້າຂອງ Seetaboot (2019), Koothong (2015) ແລະ Supakarang et al. (2019) ໂດຍມີແບບຈຳລອງ ດັ່ງນີ້:

$$P(Y/g(X))=G(g(x))=\varphi(g(x))=\int_{-\infty}^{g(x)}\varphi(v)dv$$

ໂດຍ $G(X)=\beta_0+\beta_1X_1+\beta_2X_2+\beta_3X_3+\beta_4X_4+\beta_5X_5+\beta_6X_6+\beta_7X_7+\beta_8X_8+\beta_9X_9+\beta_{10}X_{10}+\beta_{11}X_{11}$
$+\beta_{12}X_{12}+\beta_{13}X_{13}+\beta_{14}X_{14}+\beta_{15}X_{15}+\beta_{16}X_{16}+\beta_{17}X_{17}+\beta_{18}X_{18}+\beta_{19}X_{19}+\beta_{20}X_{20}+\beta_{21}X_{21}+\beta_{22}X_{22}+\vec{\varepsilon}$

ໃນນີ້, Y= ລຳດັບການຜິດນັດຊຳລະໜີ້ຂອງລູກໜີ້, $X_1$ ແມ່ນລາຍໄດ້ຕໍ່ເດືອນຕໍ່ຄອບຄົວ (ລ້ານກີບ), $X_2$ ແມ່ນລາຍຈ່າຍຕໍ່ເດືອນຕໍ່ຄອບຄົວ (ລ້ານກີບ), $X_3$ ແມ່ນຈຳນວນເງິນກູ້ທັງໝົດ (ລ້ານກີບ), $X_4$ ແມ່ນນຳເງິນກູ້ຜິດຈຸດປະສົງ (1: ແມ່ນ, 0: ບໍ່ແມ່ນ), $X_5$ ແມ່ນຍ້າຍທີ່ຢູ່ອາໄສ/ບ່ອນເຮັດວຽກ (1: ແມ່ນ, 0: ບໍ່ແມ່ນ), $X_6$ ແມ່ນມີບັນຫາທາງຄອບຄົວ (1: ແມ່ນ, 0: ບໍ່ແມ່ນ), $X_7$ ແມ່ນມີໜີ້ຫຼາຍສະຖາບັນ (1: ແມ່ນ, 0: ບໍ່ແມ່ນ), $X_8$ ແມ່ນມີເຈດຕະນາຄັ້ງຊຳລະ (1: ແມ່ນ, 0: ບໍ່ແມ່ນ), $X_9$ ແມ່ນຖືກດຳເນີນຄະດີຈາກເຈົ້າໜີ້ລາຍອື່ນ (1: ແມ່ນ, 0: ບໍ່ແມ່ນ), $X_{10}$ ແມ່ນບໍ່ຮູ້ເງື່ອນໄຂຊຳລະ (1: ແມ່ນ, 0: ບໍ່ແມ່ນ), $X_{11}$ ແມ່ນມີເຈດຕະນາຄ້າງຊຳລະເງິນກູ້ (1: ແມ່ນ, 0: ບໍ່ແມ່ນ), $X_{12}$ ແມ່ນການປ່ຽນແປງອັດຕາດອກເບ້ຍ (ມາດຕາສ່ວນ), $X_{13}$ ແມ່ນການປະເມີນຫຼັກຊັບຄ້ຳປະກັນສູງ (ມາດຕາສ່ວນ), $X_{14}$ ແມ່ນບໍ່ໄດ້ຮັບການແຈ້ງ

ເຕືອນທະນາຄານ (ມາດຕາສ່ວນ), $X_{15}$ ແມ່ນຊ່ອງທາງການຕິດຕໍ່ຊໍາລະໜີ້ບໍ່ສະດວກ (ມາດຕາສ່ວນ), $X_{16}$ ແມ່ນໄລຍະເວລາຜ່ອນຊໍາລະໜີ້ສັ້ນ (ມາດຕາສ່ວນ), $X_{17}$ ແມ່ນພະນັກງານສິນເຊື່ອບໍ່ໃຫ້ຄໍາປຶກສາ (ມາດຕາສ່ວນ), $X_{18}$ ແມ່ນພະນັກງານມີພຶດຕິກໍາບໍ່ເໝາະສົມ (ມາດຕາສ່ວນ), $X_{19}$ ແມ່ນການປ່ຽນແປງພາວະເສດຖະກິດ (ມາດຕາສ່ວນ), $X_{20}$ ແມ່ນການປ່ຽນແປງນະໂຍບາຍຂອງລັດຖະບານ (ມາດຕາສ່ວນ), $X_{21}$ ແມ່ນຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ (ມາດຕາສ່ວນ), $X_{22}$ ແມ່ນໄພພິບັດ ແລະ ໂລກລະບາດ (ມາດຕາສ່ວນ). ສ່ວນ $\beta_1;\beta_2;...,\beta_{22}$ ແມ່ນຄ່າສໍາປະສິດຂອງ $X_1, X_2,\ldots,X_{22}$ ແລະ $\varepsilon$ ຄວາມຄາດເຄືອນ.

ສໍາລັບ G(X) ໃນທາງປະຕິບັດແລ້ວ ຄືຕົວປ່ຽນແຝງ ທີ່ບໍ່ສາມາດສັງເກດໄດ້ ໂດຍຈະມີ Y ແລະ ຕົວປ່ຽນຫຸ່ນ (Dummy Variable) ເຊິ່ງເປັນສິ່ງທີ່ສາມາດເຫັນໄດ້ ເຊິ່ງສາມາດຂຽນຄວາມສໍາພັນລະຫວ່າງຕົວປ່ຽນຕາມ $Y_i$ ແລະ ຕົວປ່ຽນແຝງ G(X) ໄດ້ດັ່ງນີ້:

$Y_i=1$ (ຈໍານວນເງິນຜິດນັດຊໍາລະໜີ້ ບໍ່ເກີນ 10 ລ້ານກີບ) ຖ້າ $0<G(x)\leq\mu_1$

$Y_i=2$ (ຈໍານວນເງິນຜິດນັດຊໍາລະໜີ້ລະຫວ່າງ 11-20 ລ້ານກີບ) ຖ້າ $\mu_1<G(x)\leq\mu_2$

$Y_i=3$ (ຈໍານວນເງິນຜິດນັດຊໍາລະໜີ້ສູງກວ່າ 20 ລ້ານກີບ) ຖ້າ $\mu_2<G(x)\leq\mu_3$

ຖ້າ $\varepsilon_i$ ມີການແຈກຢາຍແບບປົກກະຕິ ມາດຕະຖານ $\varepsilon_i$ ~N(0,1) ແລ້ວຄ່າກະຕວງທີ່ໄດ້ຄື

$$P(Y_i=1|X_i)=P(0\leq G(x)\leq\mu_1|X_i)=\varphi(\mu_1-\beta' X_i)-\varphi$$

$$P(Y_i=2|X_i)=P(\mu_1\leq G(x)\leq\mu_2|X_i)=\varphi(\mu_1-\beta' X_i)-\varphi(\mu_1-\beta' X_i)$$

$$P(Y_i=3|X_i)=P(\mu_2\leq G(x)\leq\mu_3|X_i)=\varphi(\mu_3-\beta' X_i)-\varphi(\mu_2-\beta' X_i)$$

**2.5 ວິທີການວິເຄາະຂໍ້ມູນ**

ບັນດາຂໍ້ມູນທັງໝົດທີ່ໄດ້ມາຈາກແບບສອບຖາມແມ່ນນໍາມາວິເຄາະໂປຣແກຣມສໍາເລັດຮູບທາງສະຖິຕິ(GRETL) ເພື່ອວິເຄາະຫາຄ່າຄວາມຖີ່ (Frequency), ສ່ວນຮ້ອຍ (Persentage), ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation) ແລະ ການປະເມີນຄ່າສົມຜົນຖົດຖອຍໂພຣບິດແບບຈັດລຽງລໍາດັບ ເພື່ອວິເຄາະປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊໍາລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ດັ່ງນີ້:

- P-Value <0.1 ປັດໄຈດັ່ງກ່າວສົ່ງຜົນຕໍ່ການຜິດນັດຊໍາລະໜີ້ຂອງລູກໜີ້ ໃນລະດັບຄວາມສໍາຄັນທາງສະຖິຕິ 0.1.
- P-Value >0.1 ປັດໄຈດັ່ງກ່າວບໍ່ສົ່ງຜົນຕໍ່ການຜິດນັດຊໍາລະໜີ້ຂອງລູກໜີ້ ໃນລະດັບຄວາມສໍາຄັນທາງສະຖິຕິ 0.1.

**3. ຜົນໄດ້ຮັບ**

**3.1 ສະພາບການຜິດນັດຊໍາລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ**

ສະພາບຂໍ້ມູນຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ຈໍານວນ 156 ຄົນ ສ່ວນໃຫຍ່ແມ່ນເພດຊາຍ ກວມເອົາ 98.08%, ອາຍຸລະຫວ່າງ 41 ປີ ຫາ 45 ປີ ກວມເອົາ 24.36%, ສະຖານະພາບແຕ່ງງານ ກວມເອົາ 98.08%, ລະດັບການສຶກສາມັດທະຍົມຕອນຕົ້ນ ກວມເອົາ 54.49%, ອາຊີບການກະເສດ - ກະສິກໍາ ກວມເອົາ 47.44%, ຈໍານວນສະມາຊິກໃນຄອບຄົວ ມີ 5 ຄົນ ກວມເອົາ 32.05%, ລາຍໄດ້ສະເລ່ຍຕໍ່ເດືອນຕໍ່ຄອບຄົວຢູ່ລະຫວ່າງ 3,000,001 ກີບ ຫາ 3,500,000 ກີບ ກວມເອົາ 33.97% ແລະ ລາຍຈ່າຍສະເລ່ຍຕໍ່ເດືອນຕໍ່ຄອບຄົວຢູ່ລະຫວ່າງ 2,000,001 ກີບ ຫາ 2,500,000 ກີບ ກວມເອົາ 28.21% ຂອງກຸ່ມຕົວຢ່າງທັງໝົດ (ຕາຕະລາງທີ 1).

ສະພາບການຜິດນັດຊໍາລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ຈໍານວນ 156 ຄົນ ສ່ວນໃຫຍ່ມີປະລິມານການຜິດນັດລະຊໍາລະໜີ້ລະຫວ່າງ 11-20 ລ້ານກີບ ກວມເອົາ 42.31%, ຮອງລົງມາ ບໍ່ເກີນ 10 ລ້ານກີບ ຈໍານວນ 61 ຄົນ ກວມເອົາ 39.10% ແລະ ໜ້ອຍທີ່ສຸດ ສູງກວ່າ 20 ລ້ານກີບ ຈໍານວນ 29 ຄົນ ກວມເອົາ 18.59% ໂດຍມີໄລຍະເວລາການມີໜີ້ກາຍສັນຍາເງິນກູ້ບໍ່ເກີນ 3 ເດືອນ ກວມເອົາ 46.16% ເຊິ່ງໄດ້ຕິດຕໍ່ພົວພັນກັບທະນາຄານ ແລະ ພະນັກງານທະນາຄານໄດ້ດໍາເນີນຂັ້ນຕອນຕິດຕາມທວງໜີ້ເຖິງລູກໜີ້ໂດຍກົງ ກວມເອົາ 85.90% ໂດຍລູກໜີ້ຂໍຜ່ອນຜັນໄລຍະເວລາຊໍາລະໜີ້ຕາມເງື່ອນໄຂເກົ່າ ກວມເອົາ 76.53%. ວິທີການແກ້ໄຂ ແລະ ການດໍາເນີນໜີ້ກາຍສັນຍາ ຂອງທະນາຄານ ສ່ວນໃຫຍ່ແມ່ນແກ້ໄຂຮອດຄະນະກໍາມະການຂັ້ນເມືອງ ກວມເອົາ 46.15%, ຮອງລົງມາ ສ້າງປຶດບັນທຶກການຜ່ອນຜັນ - ການປະນອມໜີ້ກັບທະນາຄານ ກວມເອົາ 17.31%, ທະນາຄານສະເໜີໃຫ້ສາຂາທະນາຄານແກ້ໄຂ ກວມເອົາ 13.46%; ແກ້ໄຂຮອດການຈັດຕັ້ງຂອງທ່ານແລ້ວ ກວມເອົາ 3.21%, ປະຕິບັດຕາມປຶດບັນທຶກການຜ່ອນຜັນ - ການປະນອມໜີ້ກັບທະນາຄານ ຈໍານວນ 2 ຄົນ ກວມເອົາ 1.28% ແລະ ວິທີອື່ນໆ ກວມເອົາ 33.97% ໂດຍປະກອບມີການຕັດເງິນເດືອນຂອງລູກຄ້າ, ເຈລະຈາກັບທະນາຄານແຕ່ຍັງບໍ່ທັນແກ້ໄຂໄດ້ ເປັນຕົ້ນ (ຕາຕະລາງ 2).

### 3.2 ປັດໄຈທີ່ເປັນສາຍເຫດການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ

ປັດໄຈທີ່ເປັນສາຍເຫດການຜິດນັດຊຳລະໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ໃນຈຳນວນຜູ້ມີໜີ້ຄ້າງຊຳລະ 156 ຄົນ ຄື: 1) ປັດໄຈດ້ານລູກໜີ້ແມ່ນເກີດມາຈາກການນຳໃຊ້ເງິນກູ້ໄປຜິດກັບຈຸດປະສົງໃນການກູ້ຢືມ ກວມເອົາ 58.33%, ການບໍ່ຮູ້ເງື່ອນໄຂຂອງການຊຳລະໜີ້ລະອຽດໃນເວລາກູ້ຢືມ ກວມເອົາ 30.77%, ການມີບັນຫາທາງດ້ານຄອບຄົວ ເຊັ່ນ: ການຢ່າຮ້າງ/ເຈັບປ່ວຍ/ພິການ ກວມເອົາ 26.28%, ການມີເຈດຕະນານຳເງິນໄປຊຳລະໜີ້ອື່ນກ່ອນ ກວມເອົາ 24.36%, ການມີການໃຊ້ຈ່າຍຟຸມເຟືອຍ/ມີໜີ້ຫຼາຍສະຖາບັນ ກວມເອົາ 12.18%, ການຍ້າຍທີ່ຢູ່ອາໄສ/ປ່ຽນວຽກ/ຖືກຍົກເລີກວຽກ ກວມເອົາ 7.05%, ການໄດ້ຖືກດຳເນີນຄະດີ ຫຼື ຖືກຟ້ອງຮ້ອງຈາກເຈົ້າລາຍອື່ນ ກວມເອົາ 3.21% ແລະ ການມີເຈດຕະນາຄ້າງຊຳລະເງິນກູ້ ກວມເອົາ 2.56% (ຕາຕະລາງ 3); 2) ປັດໄຈພາຍໃນທີ່ເກີດຈາກທະນາຄານນະໂຍບາຍ ຢູ່ໃນລະດັບປານກາງ ເຊິ່ງມາຈາກໃນຊ່ອງທາງການຕິດຕໍ່ຊຳລະໜີ້ບໍ່ສະດວກ, ໄລຍະເວລາຜ່ອນຊຳລະໜີ້ໜ້ອຍ ແລະ ແຕ່ລະງວດມີເງິນຜ່ອນຊຳລະສູງ, ບໍ່ໄດ້ຮັບການແຈ້ງເຕືອນຈາກທະນາຄານກ່ຽວກັບໜີ້ຄ້າງຊຳລະ, ການປະເມີນຫຼັກຊັບສູງກວ່າຄວາມເປັນຈິງໃນຕະຫຼາດ ຄືອະນຸມັດເງິນກູ້ສູງກວ່າຫຼັກຊັບຄ້ຳປະກັນ, ພະນັກງານສິນເຊື່ອບໍ່ມີຄວາມຮູ້ຄວາມສາມາດໃນການໃຫ້ຄຳປຶກສາກ່ຽວກັບການຜ່ອນຊຳລະໜີ້ ແລະ ພຶດຕິກຳບໍ່ເໝາະສົມ, ການປ່ຽນແປງອັດຕາດອກເບ້ຍຂອງທະນາຄານປັບຕົວສູງຂຶ້ນຫຼັງຈາກການນຳໃຊ້ເງິນກູ້ (ຕາຕະລາງ 4); 3) ປັດໄຈພາຍນອກທີ່ເກີດມີໜີ້ຄ້າງຊຳລະສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຢູ່ໃນລະດັບປານກາງ ເຊິ່ງເກີດມີບັນຫາພາວະເສດຖະກິດຖົດຖອຍ (ເສດຖະກິດຕົກຕ່ຳ), ຄ່ານິຍົມ ແລະ ເຕັກໂນໂລຊີມີການປ່ຽນແປງ, ຜົນກະທົບໄພທຳມະຊາດ ແລະ ໂລກລະບາດ, ລັດຖະບານມີການປ່ຽນແປງນະໂຍບາຍເລື້ອຍໆ ເຮັດໃຫ້ການບໍລິຫານງານຂອງກິດຈະການບໍ່ຕໍ່ເນື່ອງ ເຊິ່ງເປັນບັນຫາເຮັດໃຫ້ລູກໜີ້ບໍ່ສາມາດຊຳລະເງິນກູ້ເພື່ອແກ້ໄຂຄວາມທຸກຍາກ (ຕາຕະລາງ 5).

### 3.3 ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊຳລະໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ

ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ໃນປະລິມານໜີ້ບໍ່ເກີນ 10,000,000 ກີບ ປະກອບມີ 4 ປັດໄຈ ຄື: ຈຳນວນເງິນກູ້ຢືມ, ການປ່ຽນແປງອັດຕາດອກເບ້ຍເງິນກູ້, ຊ່ອງທາງການຕິດຕໍ່ຊຳລະໜີ້ບໍ່ສະດວກ, ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ ທີ່ມີລະດັບຄວາມສຳຄັນທາງສະຖິຕິ 0.1; ປັດໄຈທີ່ມີຜົນຕໍ່ການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ໃນປະລິມານໜີ້ຢູ່ລະຫວ່າງ 10,000,000 - 20,000,000 ກີບ ປະກອບມີ 5 ປັດໄຈ ຄື: ຈຳນວນເງິນກູ້ຢືມ, ມີບັນຫາທາງຄອບຄົວ, ການປ່ຽນແປງອັດຕາດອກເບ້ຍເງິນກູ້, ຊ່ອງທາງການຕິດຕໍ່ຊຳລະໜີ້ບໍ່ສະດວກ, ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ ທີ່ມີລະດັບຄວາມສຳຄັນທາງສະຖິຕິ 0.1; ສ່ວນປັດໄຈທີ່ມີຜົນຕໍ່ການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ໃນປະລິມານໜີ້ ສູງກວ່າ 20,000,000 ກີບ ປະກອບມີພຽງ 1 ປັດໄຈ ຄື ຈຳນວນເງິນກູ້ຢືມ ທີ່ມີລະດັບຄວາມສຳຄັນທາງສະຖິຕິ 0.1 ໂດຍຄວາມຖືກຕ້ອງການພະຍາກອນໃນແບບຈຳລອງ ໄດ້ເຖິງ 91.7% (ຕາຕະລາງ 6).

## 4. ວິພາກຜົນ

1) ສະພາບການຜິດນັດຊຳລະໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ສ່ວນໃຫຍ່ມີຄ້າງຊຳລະລະຫວ່າງ 11-20 ລ້ານກີບ ແລະ ມີໄລຍະເວລາການມີໜີ້ກາຍສັນຍາເງິນກູ້ບໍ່ເກີນ 3 ເດືອນ ເຊິ່ງໄດ້ຕິດຕໍ່ພົວພັນກັບທະນາຄານ ແລະ ໄດ້ຮັບຂັ້ນຕອນການຕິດຕາມທວງໜີ້ກາຍສັນຍາຈາກພະນັກງານທະນາຄານຕິດຕາມໜີ້ເຖິງລູກໜີ້ ໂດຍລູກໜີ້ຂໍຜ່ອນຜັນໄລຍະເວລາຊຳລະໜີ້ຕາມເງື່ອນໄຂເກົ່າ ແລະ ທະນາຄານດຳເນີນແກ້ໄຂຮອດຄະນະກຳມະການຂັ້ນເມືອງ ເຊິ່ງການຄົ້ນຄວ້າສອດຄ່ອງກັບ Phounnaly (2019) ທີ່ໄດ້ຄົ້ນຄວ້າປັດໄຈທີ່ມີຜົນເຮັດໃຫ້ເກີດມີໜີ້ຄ້າງຊຳລະເງິນກູ້ຢືມເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງປາກແຊງ ແຂວງຫຼວງພະບາງ ໃນດ້ານການມີໜີ້ຄ້າງຊຳລະເງິນກູ້ເພື່ອແກ້ໄຂຄວາມທຸກຍາກ ແລະ ໄລຍະເວລາຄ້າງຊຳລະເງິນກູ້ ຂອງທະນາຄານນະໂຍບາຍ. ການຄົ້ນຄວ້າສອດຄ່ອງກັບ Seetaboot (2019) ທີ່ໄດ້ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການຄ້າງຊຳລະເງິນກູ້ປະເພດທີ່ຢູ່ອາໄສຂອງລູກຄ້າທະນາຄານສົງເຄາະ ສາຂາຊຽງໃໝ່ ແຂວງຊຽງໃໝ່ (ໄທ) ໃນດ້ານການມີໜີ້ຄ້າງຊຳລະເງິນກູ້.

ສະນັ້ນ, ທະນາຄານນະໂຍບາຍຄວນພິຈາລະນາຂະໜາດວົງເງິນກູ້ໃຫ້ເໝາະສົມກັບຂະໜາດລາຍໄດ້ ແລະ ລາຍຈ່າຍຄອບຄົວຂອງຜູ້ກູ້ໃນເມືອງທຸກຍາກ ລວມທັງຈຸດປະສົງໃນການນຳໃຊ້ເງິນກູ້ ເນື່ອງຈາກຜູ້ກູ້ຢືມເງິນແມ່ນປະຊາຊົນຢູ່ໃນເມືອງທຸກຍາກ ແລະ ມີອາຊີບເປັນການກະເສດ - ກະສິກຳ ເມື່ອເກີດວິກິດການທາງດ້ານເສດຖະກິດ, ການປ່ຽນແປງດິນຟ້າອາກາດ, ໂລກລະບາດ ແລະ ລາຄາຜົນຜະລິດຕົກຕ່ຳ

ຈະມີຜົນເຮັດໃຫ້ລູກໜີ້ບໍ່ສາມາດຊໍາລະໜີ້ເງິນກູ້ຂອງທະນາຄານນະໂຍບາຍ.

2) ປັດໄຈທີ່ເປັນເຫດການເກີດມີໜີ້ຄ້າງຊໍາລະສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ມາຈາກ 3 ປັດໄຈ ຄື: ປັດໄຈລູກໜີ້, ປັດໄຈພາຍໃນທີ່ເກີດຈາກທະນາຄານນະໂຍບາຍ ແລະ ປັດໄຈພາຍນອກ ເຊິ່ງການຄົ້ນຄວ້າສອດຄ່ອງກັບ Phounnaly (2019) ໄດ້ຄົ້ນຄວ້າປັດໄຈທີ່ມີຜົນເຮັດໃຫ້ເກີດມີໜີ້ຄ້າງຊໍາລະເງິນກູ້ຢືມເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງປາກແຊງ ແຂວງຫຼວງພະບາງ ໃນທຸກດ້ານ. ການຄົ້ນຄວ້າສອດຄ່ອງກັບ Seetaboot (2019) ທີ່ໄດ້ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການຄ້າງຊໍາລະເງິນກູ້ປະເພດທີ່ຢູ່ອາໄສຂອງລູກຄ້າທະນາຄານສົງເຄາະ ສາຂາຊຽງໃໝ່ ແຂວງຊຽງໃໝ່ (ໄທ) ໃນທຸກດ້ານ, ການຄົ້ນຄວ້າສອດຄ່ອງກັບ Somtua (2015) ທີ່ໄດ້ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການຄ້າງຊໍາລະສິນເຊື່ອນະໂຍບາຍລັດຂອງທະນາຄານອອມສິນສາຂາຈະນະ ແຂວງສົງຂາ (ໄທ) ໃນທຸກດ້ານ, ການຄົ້ນຄວ້າສອດຄ່ອງກັບ Klinkajon (2023) ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊໍາລະໜີ້ຂອງກະເສດຕະກອນ: ກໍລະນີສຶກສາທະນາຄານເພື່ອການກະເສດ ແລະ ສະຫະກອນການກະເສດ ເມືອງແມ່ວົງ ແຂວງນະຄອນສະຫວັນ (ໄທ) ໃນທຸກດ້ານ. ການຄົ້ນຄວ້າແຕກຕ່າງຈາກ Supakarang et al. (2019) ປັດໄຈທີ່ສົ່ງຜົນຕໍ່ການຄ້າງຊໍາລະໜີ້ຂອງລູກໜີ້ທະນາຄານພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແຫ່ງປະເທດໄທ ໃນທຸກດ້ານ.

ສະນັ້ນ, ການບໍລິຫານສິນເຊື່ອຂອງທະນາຄານນະໂຍບາຍຄວນໃຫ້ຄວາມສໍາຄັນ ແລະ ພິຈາລະນາ ຄື: (1) ປັດໄຈລູກໜີ້ ໃນດ້ານການນໍາໃຊ້ເງິນກູ້ໄປຜິດກັບຈຸດປະສົງໃນການກູ້ຢືມ, ເງື່ອນໄຂຂອງການຊໍາລະໜີ້, ບັນຫາທາງດ້ານຄອບຄົວ, ໜີ້ຫຼາຍສະຖາບັນ, ການຍ້າຍທີ່ຢູ່ອາໄສ/ປ່ຽນວຽກ/ຖືກຍົກເລີກວຽກ ແລະ ປະຫວັດການກູ້ຢືມ; (2) ປັດໄຈພາຍໃນທີ່ເກີດຈາກທະນາຄານນະໂຍບາຍ ໃນດ້ານຊ່ອງທາງການຕິດຕໍ່ຊໍາລະໜີ້, ໄລຍະເວລາຜ່ອນຊໍາລະໜີ້ ແລະ ຈໍານວນເງິນຜ່ອນຊໍາລະ, ການແຈ້ງເຕືອນໃຫ້ລູກໜີ້, ການປະເມີນຫຼັກຊັບຄໍ້າປະກັນ, ຄວາມຮູ້ - ຄວາມສາມາດໃນການໃຫ້ຄໍາປຶກສາກ່ຽວກັບການຜ່ອນຊໍາລະໜີ້ ແລະ ພຶດຕິກໍາຂອງພະນັກງານ, ການປ່ຽນແປງອັດຕາດອກເບ້ຍ; (3) ປັດໄຈພາຍນອກໃນບັນຫາພາວະເສດຖະກິດ, ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ, ຜົນກະທົບໄພທໍາມະຊາດ ແລະ ໂລກລະບາດ, ການປ່ຽນແປງນະໂຍບາຍຂອງລັດຖະບານ ຕາມລໍາດັບ.

3) ປັດໄຈທີ່ສົ່ງຜົນຕໍ່ການເກີດມີການຜິດນັດຊໍາລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ປະກອບມີ 5 ປັດໄຈ ຄື: ປັດໄຈຈໍານວນເງິນກູ້ຢືມ, ການມີບັນຫາທາງຄອບຄົວ, ການປ່ຽນແປງອັດຕາດອກເບ້ຍເງິນກູ້, ຊ່ອງທາງການຕິດຕໍ່ຊໍາລະໜີ້ບໍ່ສະດວກ, ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ. ການຄົ້ນຄວ້າສອດຄ່ອງກັບ Seetaboot (2019) ທີ່ໄດ້ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການຄ້າງຊໍາລະເງິນກູ້ປະເພດທີ່ຢູ່ອາໄສຂອງລູກຄ້າທະນາຄານສົງເຄາະ ສາຂາຊຽງໃໝ່ ແຂວງຊຽງໃໝ່ (ໄທ) ໃນປັດໄຈດ້ານການປ່ຽນແປງອັດຕາດອກເບ້ຍ ແລະ ຊ່ອງທາງການຕິດຕໍ່ຊໍາລະໜີ້ບໍ່ສະດວກ. ການຄົ້ນຄວ້າສອດຄ່ອງກັບ Laorattanasai (2023) ທີ່ໄດ້ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການຜິດນັດການຊໍາລະໜີ້ຂອງລູກໜີ້ສິນເຊື່ອທີ່ຢູ່ອາໄສໃນເຂດກຸງເທບມະຫານະຄອນ ແລະ ປະລິມົນທົນຂອງບໍລິສັດບໍລິຫານສິນຊັບກຸງເທບມະຫານະຄອນ ມະຫາຊົນ (ໄທ) ໃນປັດໄຈດ້ານວົງເງິນກູ້ ແລະ ອັດຕາດອກເບ້ຍ. ການຄົ້ນຄວ້າຂັດແຍ່ງຈາກ Phounnaly (2019) ໄດ້ຄົ້ນຄວ້າປັດໄຈທີ່ມີຜົນເຮັດໃຫ້ເກີດມີໜີ້ຄ້າງຊໍາລະເງິນກູ້ຢືມເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງປາກແຊງ ແຂວງຫຼວງພະບາງ ໃນທຸກດ້ານ. ການຄົ້ນຄວ້າແຕກຕ່າງຈາກ Somtua (2015) ທີ່ໄດ້ຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການຄ້າງຊໍາລະສິນເຊື່ອນະໂຍບາຍລັດຂອງທະນາຄານອອມສິນສາຂາຈະນະ ແຂວງສົງຂາ (ໄທ) ໃນທຸກດ້ານ, ການຄົ້ນຄວ້າແຕກຕ່າງຈາກ Klinkajon (2023) ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊໍາລະໜີ້ຂອງກະເສດຕະກອນ: ກໍລະນີສຶກສາທະນາຄານເພື່ອການກະເສດ ແລະ ສະຫະກອນການກະເສດ ເມືອງແມ່ວົງ ແຂວງນະຄອນສະຫວັນ (ໄທ) ໃນທຸກດ້ານ. ການຄົ້ນຄວ້າແຕກຕ່າງຈາກ Supakarang et al. (2019) ປັດໄຈທີ່ສົ່ງຜົນຕໍ່ການຄ້າງຊໍາລະໜີ້ຂອງລູກໜີ້ທະນາຄານພັດທະນາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ແຫ່ງປະເທດໄທ ໃນທຸກດ້ານ.

ສະນັ້ນ, ການບໍລິຫານສິນເຊື່ອເພື່ອບໍ່ໃຫ້ເກີດມີໜີ້ຄ້າງຊໍາລະເພີ່ມຂຶ້ນໃນອະນາຄົດ ຕ້ອງໃຫ້ຄວາມສໍາຄັນປັດໄຈດ້ານຈໍານວນເງິນກູ້ຢືມ, ບັນຫາທາງຄອບຄົວ, ການປ່ຽນແປງອັດຕາດອກເບ້ຍເງິນກູ້, ຊ່ອງທາງການຕິດຕໍ່ຊໍາລະໜີ້ບໍ່ສະດວກ, ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ. ນອກຈາກນັ້ນ, ຕ້ອງພິຈາລະນາຈາກຫຼັກການໃຫ້ສິນເຊື່ອ 6C's, 3P's ເປັນຕົ້ນ.

## 5. ສະຫຼຸບ

ສະພາບການຜິດນັດຊໍາລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນໍ້າທາ ສ່ວນໃຫຍ່ມີຄ້າງຊໍາລະລະຫວ່າງ 11-20 ລ້ານກີບ ແລະ ໄລຍະເວລາການມີໜີ້ກາຍສັນຍາເງິນກູ້ບໍ່ເກີນ 3 ເດືອນ ເຊິ່ງລູກໜີ້ໄດ້ຕິດຕໍ່ພົວພັນກັບທະນາຄານຂໍຜ່ອນຜັນໄລຍະເວລາຊໍາລະໜີ້ຕາມເງື່ອນໄຂເກົ່າ ແລະ ວິທີການແກ້ໄຂການຜິດນັດຊໍາລະໜີ້ແມ່ນແກ້ໄຂຮອດຄະນະກໍາມະການຂັ້ນເມືອງ ໂດຍພະນັກງານທະນາຄານໄດ້ດໍາເນີນຂັ້ນຕອນຕິດຕາມທວງໜີ້ເຖິງລູກໜີ້ໂດຍກົງ.

ປັດໄຈທີ່ເປັນສາຍເຫດການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ມາຈາກ 3 ປັດໄຈ ຄື: ປັດໄຈລູກໜີ້ໃນດ້ານນຳໃຊ້ເງິນກູ້ໄປຜິດກັບຈຸດປະສົງໃນການກູ້ຢືມ, ປັດໄຈພາຍໃນທີ່ເກີດຈາກທະນາຄານນະໂຍບາຍໃນດ້ານໃນຊ່ອງທາງການຕິດຕໍ່ຊຳລະໜີ້ບໍ່ສະດວກ ແລະ ປັດໄຈພາຍນອກໃນດ້ານບັນຫາພາວະເສດຖະກິດຖົດຖອຍ.

ປັດໄຈທີ່ສົ່ງຜົນຕໍ່ການຜິດນັດຊຳລະໜີ້ຂອງລູກໜີ້ສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ ປະກອບມີ 5 ປັດໄຈ ຄື: ປັດໄຈຈຳນວນເງິນກູ້ຢືມ, ການມີບັນຫາທາງຄອບຄົວ, ການປ່ຽນແປງອັດຕາດອກເບ້ຍເງິນກູ້, ຊ່ອງທາງການຕິດຕໍ່ຊຳລະໜີ້ບໍ່ສະດວກ, ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Bank of the Lao. PDR. (2018). *Agreement on the classification of debts and deduction of provisions for classified debts of commercial banks*. Retrieved from https://www.bol.gov.la/fileupload/28-01-2022_1643336276.PDF

Bank of the Lao. PDR. (2020). *Credit policy to promote product production and alleviate people's poverty.* Vientaine: Bank of the Lao. PDR.

Fullerton, A. S. (2009). A conceptual framework for ordered logistic regression models. *Sociological Methods & Research, 38*(1), 306–347.

Johnston, C., McDonald, J., & K Quist. (2019). A Generalized Ordered Probit Model. *Communications in Statistics Theory and Methods, 49*(7), 1712-1729.

Klinkajon, K. (2023). *factors affecting loan default: Case study of bank for Agriculture Cooperative bank, Mae Wong branch, Nakhon Sawan province Mae Wong district,.* Retrieved from https://nuir.lib.nu.ac.th/dspace/bitstream/123456789/6047/3/KanisornKlinkajon.pdf

Koothong, P. (2015). *Factors affecting Non – Performing Loans of Government Savings Bank: A Case Study Bangkok Region.* Retrieved from https://econ.eco.ku.ac.th/2016/is/IS%205681.pdf

Laorattanasai. (2023). *Factors affecting default on housing loan in Bangkok metropolitan region of Bangkok commercial asset management PCL.* Retrieved from https://ethesisarchive.library.tu.ac.th/thesis/2023/TU_2023_6504010098_19269_29346.pd

Likert, R. (1932). A technique for the measurement of attitudes. *Archives of Psychology, 22*(140), 1–55.

Luang Namtha Nayoby Bank branch. (2023). *A six-month credit activity report.* Luang Namtha: Pha oudom Service unit.

Ministry of Planning and Investment. (2021). *9th Five-year national socio-economic devilment plan (2021-2025).* Retrieved from https://nipn.lsb.gov.la

Nayoby Bank. (2006). *Location and role*. Retrieved from https://www.nbb.com.la/?page_id=59

Phounnaly, P. (2019). Factor affecting the outstanding debt on poverty loan of Nayoby bank, Parkseang Service Unit, Luang Prabang Province. *Multidisciplinary Research and Development, 5*(1), 25-32.

Pittayawiwit, C. (1991). *Financial Markets in Thailand.* Bangkok: Amornrin Printing Group Co., LTD.

Rovinelli, R. J., & Hambleton, R. (1977). On the use of content specialists in the assessment of criterion-referenced test item validity. *Tijdschrift Voor Onderwijs Research, 2*(2), 49–60.

Seetaboot, S. (2019). *Factors affecting accrued mortgage loans payment of Government Housing Bank's customers, Chiang Mai Branch, Chiang Mai Province.* Retrieved from https://cmudc.library.cmu.ac.th/frontend/Info/item/dc:161527

Somtua, W. (2015). *Factors affecting the outstanding debt on government Policy loan of the government saving bank, chana Branch, Songkha province.* Retrieved from https://kb.psu.ac.th/psukb/bitstream/2016/11318/4/wannee_Fulltext.pdf

Sungkhamanee, K. (2007). *Money and Banking.* Bangkok: Buan Sunandha Rajabhat University Book Center.

Supakarang, T., Somboonsup, S., & Pattanarangsun, P. (2019). *Factor affecting Non-performing Loan of small and medium enterprise devepment bank of Thailand.* Retrieved from https://econ.src.ku.ac.th/QA/files/2562/mbe/6-50

Taber, K. S. (2017). The Use of Cronbach's Alpha when Developing and Reporting Research Instruments in Science Education. *Research in Science Education, 48*(6), 1273-1296.

ຕາຕະລາງ 1: ສະແດງເຖິງ ຈຳນວນ ແລະ ສ່ວນຮ້ອຍສະພາບຂໍ້ມູນທົ່ວໄປຂອງຜູ້ມີໜີ້ຄ້າງຊຳລະສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ໃນເມືອງພາອຸດົມ ແຂວງບໍ່ແກ້ວ.

| ລ/ດ | ສະພາບຂໍ້ມູນຂອງຜູ້ມີໜີ້ຄ້າງຊຳລະ | ຈຳນວນ | ສ່ວນຮ້ອຍ (%) |
|---|---|---|---|
| 1 | ເພດສ່ວນໃຫຍ່ແມ່ນຊາຍ | 153 | 98.08 |
| 2 | ອາຍຸສ່ວນໃຫຍ່ແມ່ນຢູ່ລະຫວ່າງ 41 - 45 ປີ | 38 | 24.36 |
| 3 | ສະຖານະພາບສ່ວນໃຫຍ່ແມ່ນແຕ່ງງານ | 153 | 98.08 |
| 4 | ລະດັບການສຶກສາສ່ວນໃຫຍ່ແມ່ນມັດທະຍົມຕອນຕົ້ນ | 85 | 54.49 |
| 5 | ອາຊີບສ່ວນໃຫຍ່ແມ່ນການກະເສດ - ກະສິກຳ | 74 | 47.44 |
| 6 | ຈຳນວນສະມາຊິກໃນຄອບຄົວ ສ່ວນໃຫຍ່ ມີ 5 ຄົນ | 50 | 32.05 |
| 7 | ລາຍໄດ້ສະເລ່ຍຕໍ່ເດືອນຕໍ່ຄອບຄົວຢູ່ລະຫວ່າງ 3,000,001-3,500,000 ກີບ | 53 | 33.97 |
| 8 | ລາຍຈ່າຍສະເລ່ຍຕໍ່ເດືອນຕໍ່ຄອບຄົວຢູ່ລະຫວ່າງ 2,000,001-2,500,000 ກີບ | 44 | 28.21 |

ຕາຕະລາງ 2: ສະແດງເຖິງ ຈຳນວນ ແລະ ສ່ວນຮ້ອຍສະພາບການມີໜີ້ຄ້າງຊຳລະຂອງຜູ້ມີໜີ້ຄ້າງຊຳລະສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ໃນເມືອງພາອຸດົມ ແຂວງບໍ່ແກ້ວ.

| ລ/ດ | ສະພາບການມີໜີ້ຄ້າງຊຳລະ (ໜີ້ກາຍສັນຍາເງິນກູ້) | ຈຳນວນ | ສ່ວນຮ້ອຍ (%) |
|---|---|---|---|
| 1 | ຈຳນວນໜີ້ກາຍສັນຍາເງິນກູ້ ສ່ວນໃຫຍ່ລະຫວ່າງ 11-20 ລ້ານກີບ | 66 | 42.31 |
| 2 | ໄລຍະເວລາການມີໜີ້ກາຍສັນຍາເງິນກູ້ ສ່ວນໃຫຍ່ບໍ່ເກີນ 3 ເດືອນ | 72 | 46.16 |
| 3 | ການຕິດຕໍ່ພົວພັນ ແລະ ຂັ້ນຕອນການຕິດຕາມທວງໜີ້ສ່ວນໃຫຍ່ແມ່ນໃຫ້ພະນັກງານທະນາຄານຕິດຕາມໜີ້ເຖິງລູກໜີ້ໂດຍກົງ | 134 | 85.90 |
| 4 | ການດຳເນີນຂອງລູກໜີ້ສ່ວນໃຫຍ່ແມ່ນຂໍຜ່ອນຜັນໄລຍະເວລາຊຳລະໜີ້ຕາມເງື່ອນໄຂເກົ່າ | 75 | 76.53 |
| 5 | ວິທີການແກ້ໄຂ ແລະ ການດຳເນີນໜີ້ກາຍສັນຍາຂອງທະນາຄານ ສ່ວນໃຫຍ່ແມ່ນແກ້ໄຂຮອດຄະນະກຳມະການຂັ້ນເມືອງ | 72 | 46.15 |

ຕາຕະລາງ 3: ສະແດງເຖິງ ຈຳນວນ ແລະ ສ່ວນຮ້ອຍ ປັດໄຈດ້ານລູກໜີ້ທີ່ໃຊ້ບໍລິການສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ໃນເມືອງພາອຸດົມ ແຂວງບໍ່ແກ້ວ.

| ລ/ດ | ປັດໄຈດ້ານລູກໜີ້ | ແມ່ນ | | ບໍ່ແມ່ນ | |
|---|---|---|---|---|---|
| | | ຈຳນວນ | % | ຈຳນວນ | % |
| 1 | ການນຳໃຊ້ເງິນກູ້ໄປຜິດກັບຈຸດປະສົງໃນການກູ້ຢືມ | 91 | 58.33 | 65 | 41.67 |
| 2 | ການຍ້າຍທີ່ຢູ່ອາໄສ/ປ່ຽນວຽກ/ຖືກເລີກວຽກ | 11 | 7.05 | 145 | 92.95 |

| | | | | | |
|---|---|---|---|---|---|
| 3 | ການມີບັນຫາທາງດ້ານຄອບຄົວ | 41 | 26.28 | 115 | 73.72 |
| 4 | ການມີການໃຊ້ຈ່າຍຟູມເຟືອຍ/ມີໜີ້ຫຼາຍສະຖາບັນ | 19 | 12.18 | 137 | 87.82 |
| 5 | ການມີເຈດຕະນານຳເງິນໄປຊຳລະໜີ້ອື່ນກ່ອນ | 38 | 24.36 | 118 | 75.64 |
| 6 | ການໄດ້ຖືກດຳເນີນຄະດີ ຫຼື ຖືກຟ້ອງຮ້ອງຈາກເຈົ້າລາຍອື່ນ | 5 | 3.21 | 151 | 96.79 |
| 7 | ການບໍ່ຮູ້ເງື່ອນໄຂຂອງການຊຳລະໜີ້ລະອຽດໃນເວລາກູ້ຢືມ | 48 | 30.77 | 108 | 69.23 |
| 8 | ການມີເຈດຕະນາຄ້າງຊຳລະເງິນກູ້ | 4 | 2.56 | 152 | 97.44 |

ຕາຕະລາງ 4: ສະແດງເຖິງ ຈຳນວນ, ສ່ວນຮ້ອຍ ແລະ ລະດັບຄວາມສຳຄັນປັດໄຈພາຍໃນທີ່ເກີດຈາກທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ.

| ລ/ດ | ປັດໄຈພາຍໃນທີ່ເກີດຈາກທະນາຄານ | n | $\bar{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ຊ່ອງທາງການຕິດຕໍ່ຊຳລະໜີ້ບໍ່ສະດວກ | 156 | 2.73 | 0.75 | ປານກາງ |
| 2 | ໄລຍະເວລາຜ່ອນຊຳລະໜີ້ໜ້ອຍ ແລະ ແຕ່ລະງວດມີເງິນຜ່ອນຊຳລະສູງ | 156 | 2.52 | 0.87 | ໜ້ອຍ |
| 3 | ບໍ່ໄດ້ຮັບການແຈ້ງເຕືອນຈາກທະນາຄານ | 156 | 2.13 | 0.67 | ໜ້ອຍ |
| 4 | ການປະເມີນຫຼັກຊັບສູງກວ່າຄວາມເປັນຈິງ | 156 | 2.08 | 0.53 | ໜ້ອຍ |
| 5 | ພະນັກງານສິນເຊື່ອບໍ່ມີຄວາມຮູ້ - ຄວາມສາມາດ | 156 | 2.04 | 0.68 | ໜ້ອຍ |
| 6 | ພະນັກງານມີພຶດຕິກຳບໍ່ເໝາະສົມ | 156 | 1.98 | 0.64 | ໜ້ອຍ |
| 7 | ການປ່ຽນແປງອັດຕາດອກເບ້ຍຂອງທະນາຄານ | 156 | 1.79 | 0.61 | ໜ້ອຍທີ່ສຸດ |
| | ລວມ | 156 | 2.18 | 0.43 | ໜ້ອຍ |

ຕາຕະລາງ 5: ສະແດງເຖິງ ຈຳນວນ, ສ່ວນຮ້ອຍ ແລະ ລະດັບຄວາມສຳຄັນປັດໄຈພາຍນອກ ທີ່ເຮັດເກີດມີໜີ້ຄ້າຊຳລະ ທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ.

| ລ/ດ | ປັດໄຈພາຍນອກ | n | $\bar{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ບັນຫາພາວະເສດຖະກິດຖົດຖອຍ | 156 | 4.38 | 0.76 | ຫຼາຍທີ່ສຸດ |
| 2 | ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ | 156 | 3.52 | 0.89 | ຫຼາຍ |
| 3 | ຜົນກະທົບໄພທຳມະຊາດ ແລະ ໂລກລະບາດ | 156 | 2.81 | 0.89 | ປານກາງ |
| 4 | ລັດຖະບານມີການປ່ຽນແປງນະໂຍບາຍເລື້ອຍໆ | 156 | 2.1 | 0.9 | ໜ້ອຍ |
| | ລວມ | 156 | 3.20 | 0.55 | ປານກາງ |

ຕາຕະລາງ 6: ການປະເມີນ Marginal effects ຂອງປັດໄຈທີ່ມີຄວາມສຳພັນຕໍ່ການເກີດມີໜີ້ຄ້າງຊຳລະສິນເຊື່ອເພື່ອແກ້ໄຂຄວາມທຸກຍາກ ຂອງທະນາຄານນະໂຍບາຍ ໜ່ວຍບໍລິການເມືອງຜາອຸດົມ ສາຂາຫຼວງນ້ຳທາ

| ລ/ດ | ເນື້ອໃນ | dp/dx | | |
|---|---|---|---|---|
| | | ຈຳນວນເງິນຄ້າງລະຊຳລະ | | |
| | | ບໍ່ເກີນ 10 ລ້ານກີບ | 11-20 ລ້ານກີບ | ສູງກວ່າ 20 ລ້ານກີບ |
| X1 | ລາຍໄດ້ຕໍ່ເດືອນຕໍ່ຄອບຄົວ | $0.0212^{ns}$ | $-0.0188^{ns}$ | $-0.0024^{ns}$ |
| X2 | ລ່າຍຈ່າຍຕໍ່ເດືອນຕໍ່ຄອບຄົວ | $-0.0589^{ns}$ | $0.0523^{ns}$ | $0.0066^{ns}$ |
| X3 | ຈຳນວນເງິນກູ້ທັງໝົດ | $-0.0952^{***}$ | $0.0846^{***}$ | $0.0107^{*}$ |
| X4 | ເງິນກູ້ຜິດວັດຖຸປະສົງ | $0.1133^{ns}$ | $-0.0991^{ns}$ | $-0.0143^{ns}$ |
| X5 | ຍ້າຍທີ່ຢູ່ອາໄສ/ປ່ຽນແປງວຽກງານ | $-0.0170^{ns}$ | $0.0150^{ns}$ | $0.0021^{ns}$ |
| X6 | ມີບັນຫາທາງຄອບຄົວ | $-0.1440^{ns}$ | $0.1028^{**}$ | $0.0412^{ns}$ |
| X7 | ໃຊ້ຈ່າຍຟູມເຟືອຍ/ມີໜີ້ຫຼາຍສະຖາບັນ | $0.1708^{ns}$ | $-0.1608^{ns}$ | $-0.0099^{ns}$ |

| | | | | |
|---|---|---|---|---|
| X8 | ມີເຈດຕະນາຄ້າງຊໍາລະ ຫຼືບໍ່ຊໍາລະ | $0.2072^{ns}$ | $-0.1964^{ns}$ | $-0.0108^{ns}$ |
| X9 | ຖືກດໍາເນີນຄະດີຈາກເຈົ້າໜີ້ລາຍອື່ນ | $-0.0465^{ns}$ | $0.0399^{ns}$ | $0.0066^{ns}$ |
| X10 | ບໍ່ຮູ້ເງື່ອນໄຂຊໍາລະ | $-0.0098^{ns}$ | $0.0086^{ns}$ | $0.0012^{ns}$ |
| X11 | ມີເຈດຕະນາຄ້າງຊໍາລະເງິນກູ້ | $-0.3337^{ns}$ | $0.2963^{ns}$ | $0.0374^{ns}$ |
| X12 | ການປ່ຽນແປງອັດຕາດອກເບ້ຍ | $0.1362^{*}$ | $-0.1210^{*}$ | $-0.0153^{ns}$ |
| X13 | ການປະເມີນຫຼັກຊັບຄໍ້າປະກັນສູງ | $0.0191^{ns}$ | $-0.0169^{ns}$ | $-0.0021^{ns}$ |
| X14 | ບໍ່ໄດ້ຮັບການແຈ້ງເຕືອນທະນາຄານ | $-0.0664^{ns}$ | $0.0590^{ns}$ | $0.0074^{ns}$ |
| X15 | ຊ່ອງທາງການຕິດຕໍ່ຊໍາລະໜີ້ບໍ່ສະດວກ | $0.1157^{*}$ | $-0.1027^{*}$ | $-0.0129^{ns}$ |
| X16 | ໄລຍະເວລາຜ່ອນຊໍາລະໜີ້ນ້ອຍ | $-0.0592^{ns}$ | $0.0526^{ns}$ | $0.0066^{ns}$ |
| X17 | ພະນັກງານສິນເຊື່ອບໍ່ໃຫ້ຄໍາປຶກສາ | $-0.0406^{ns}$ | $0.0360^{ns}$ | $0.0046^{ns}$ |
| X18 | ພະນັກງານມີພຶດຕິກໍາບໍ່ເໝາະສົມ | $-0.1641^{ns}$ | $0.1457^{ns}$ | $0.0184^{ns}$ |
| X19 | ການປ່ຽນແປງພາວະເສດຖະກິດ | $0.0283^{ns}$ | $-0.0252^{ns}$ | $-0.0032^{ns}$ |
| X20 | ນະໂຍບາຍຂອງລັດຖະບານ | $0.0085^{ns}$ | $-0.0075^{ns}$ | $-0.0009^{ns}$ |
| X21 | ຄ່ານິຍົມ ແລະ ການປ່ຽນແປງເຕັກໂນໂລຊີ | $-0.1001^{**}$ | $0.0889^{***}$ | $0.0112^{ns}$ |
| X22 | ໄພພິບັດ ແລະ ໂລກລະບາດ | $0.0324^{ns}$ | $-0.0288^{ns}$ | $-0.0036^{ns}$ |
| Log-likelihood =-62.04595; Number of cases 'correctly predicted' = 143 (91.7%) | | | | |